ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC

# ວັດໂສກປ່າຫຼວງ ບໍລິຈາກຜ່ານ OneHeart

## ເພື່ອຊ່ວຍເຫຼືອຜູ້ປະສົບໄພພິບັດນໍ້າຖ້ວມ ທີ່ ເມືອງ ສະໜາມໄຊ, ແຂວງອັດຕະປື

ໃນວັນສຸກ ວັນທີ 27 ກໍລະກົດ 2018 ທີ່ວັດມະຫາພຸທທະວົງສາປ່າຫຼວງ ບ້ານ ໂສກປ່າຫຼວງ ພຣະອາຈານ ຄຳປໍ ອາພິນັນໂທ ຮັກສາການເຈົ້າອະທິການວັດມະຫາພຸທທະວົງສາປ່າຫຼວງ ພ້ອມດ້ວຍການຈັດຕັ້ງບ້ານ ແລະ ພໍ່ແມ່ປະຊາຊົນ ໄດ້ມອບເງິນຈຳນວນ **41.636.500 ກີບ, 5.730 ບາດ** ແລະ **319 ໂດລາ** (ຕົວເລກທີ່ມອບ-ຮັບຕົວຈິງເນື່ອງຈາກມີເຈົ້າສັດທາຈຳນວນໜຶ່ງໄດ້ນຳເງິນມາມອບຕື່ມຫຼັງຈາກພິທີມອບ-ຮັບທາງການ) ເຂົ້າໃນໂຄງການ **BCEL OneHeart** ເພື່ອຊ່ວຍເຫຼືອຜູ້ປະສົບໄພພິບັດນໍ້າຖ້ວມທີ່ ແຂວງ ອັດຕະປື, ຕາງໜ້າຮັບໂດຍ ທ່ານ ສອນນາລິນ ແສງມະນີ ຮອງຫົວໜ້າພະແນກຫ້ອງການບໍລິຫານ-ການເງິນ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ພ້ອມດ້ວຍຄະນະ. ເງິນຈຳນວນດັ່ງກ່າວແມ່ນໄດ້ຮັບຈາກພໍ່ແມ່ປະຊາຊົນທີ່ເຂົ້າມາທຳບຸນໃນມື້ເຂົ້າພັນສາຢູ່ວັດໂສກປ່າຫຼວງ. ເຊິ່ງຈຳນວນເງິນດັ່ງກ່າວນີ້ຈະນຳໄປສົມທົບກັບ ຈຳນວນເງິນທີ່ສັງຄົມຮ່ວມບໍລິຈາກຊ່ວຍຜູ້ປະສົບໄພພິບັດນໍ້າຖ້ວມ ທີ່ແຂວງອັດຕະປື ຜ່ານ **BCEL OneHeart.**

ໃນການນຳໃຊ້ເງິນຕົວຈິງ ຄະນະກຳມະການຂອງ ທຄຕລ ຈະໄດ້ສົມທົບກັບພາກສ່ວນກ່ຽວຂ້ອງ ແລະ ປະຊາຊົນຜູ້ປະສົບໄພພິບັດນໍ້າຖ້ວມທີ່ ແຂວງ ອັດຕະປື ເພື່ອນຳໃຊ້ທຶນດັ່ງກ່າວຈັດຫາສິ່ງຈຳເປັນໃຫ້ແກ່ຜູ້ປະສົບໄພ ເພື່ອຮັບປະກັນການຊ່ວຍເຫຼືອຖືກຕ້ອງຕາມຄວາມຕ້ອງການ ແລະ ໄປເຖິງຜູ້ປະສົບໄພຢ່າງແທ້ຈິງ. ໃນຂັ້ນຕອນການມອບຮັບເຄື່ອງຂອງບໍລິຈາກແຕ່ລະຄັ້ງ ທຄຕລ ຈະເຊີນພາກສ່ວນກ່ຽວຂ້ອງ ແລະ ຜູ້ບໍລິຈາກມີສ່ວນເຂົ້າຮ່ວມນຳ.

ຖືໂອກາດນີ້ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ຂໍນ້ອມສະແດງຄວາມຮູ້ບຸນຄຸນ ແລະ ຂໍຂອບໃຈຢ່າງສູງຕໍ່ຄະນະສົງ, ອຳນາດການປົກຄອງ ແລະ ພໍ່ແມ່ປະຊາຊົນພາຍໃນບ້ານໂສກປ່າຫຼວງ ທີ່ໄດ້ມີສັດທາອັນແຮງກ້າໃນການປະກອບສ່ວນທຶນຮອນອັນປະເສີດ ເພື່ອຊ່ວຍເຫຼືອປະຊາຊົນຜູ້ທີ່ໄດ້ຮັບຜົນກະທົບຈາກໄພພິບັດນໍ້າຖ້ວມຢູ່ແຂວງອັດຕະປື ໃນຄັ້ງນີ້ດ້ວຍ.

ທ່ານກໍ່ສາມາດມີສ່ວນຮ່ວມແບ່ງປັນນໍ້າໃຈຊ່ວຍເຫຼືອສັງຄົມ ຜ່ານ BCEL OneHeart ດ້ວຍຕົວທ່ານເອງໄດ້. BCEL OneHeart ຫົວໃຈດຽວກັນ (ສະດວກວ່ອງໄວໂປ່ງໃສ) ຂໍ້ມູນເພີ່ມເຕີມ: Website: www.oneheart.la









ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
ທັນສະໄໝ ວ່ອງໄວ ໝັ້ນໃຈ
Facebook: BCEL Bank, Website: www.bcel.com.la